# ພຣະທັມອາໂມດ


| | | | | |
|---|---|---|---|---|
| 1 | 2 | 3 | 4 | 5 |
| 6 | 7 | 8 | 9 | |


## ອາໂມສ

## AMOS

# 1

Chapter 1

1 ຕໍ່ໄປນີ້ແມ່ນຄຳເວົ້າຂອງອາໂມສ ຊຶ່ງເປັນຜູ້ລ້ຽງແກະຄົນນຶ່ງໃນເມືອງເຕໂກອາ ກ່ອນແຜ່ນດິນໄຫວສອງປີ ພຣະເຈົ້າ
ໄດ້ນຳຂ່າວມາໃຫ້ອາໂມສທາງນິມິດ ຊຶ່ງເປັນຄາວອຸສຊີຢາເປັນເຈົ້າຊີວິດຂອງຊາວຢູດາ ແລະໃນຄາວທີ່ເຢໂຣໂບ
ອາມບຸດຂອງໂຢອັສ ເປັນເຈົ້າຊີວິດຂອງຊາວອິສຣາເອນ

**ພຣະເຈົ້າຊົງພິພາກສາປະເທດໃກ້ຄຽງຂອງອິສຣາເອນ ປະເທດຊີເຣັຽ**

Judgment on Israel’s Neighbors

2 ອາໂມສໄດ້ເວົ້າວ່າ, “ພຣະຜູ້ເປັນເຈົ້າຊົງສົ່ງສຽງຮ້ອງມາຈາກພູຊີໂອນ ພຣະສຸຣະສຽງຂອງພຣະອົງຍັງດັງກ້ອງຈາກ
ເມືອງເຢຣູຊາເລັມ ໃນເວລານັ້ນ ປ່າຫຍ້າທັງຫລາຍກໍຫ່ຽວແຫ້ງ ແລະຫຍ້າຂຽວສົດຢູ່ເທິງຈອມພູກາເມນກໍລ່າເຫລືອງ
ລົງ

3 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຊາວດາມັສກັສໄດ້ເຮັດຜິດຕື່ມຂຶ້ນຢູ່ເລື້ອຍໆ ເຮົາຈະລົງໂທດພວກເຂົາຢ່າງແນ່ນອນ ກໍ
ຍ້ອນວ່າພວກເຂົາໄດ້ກະທຳການໂຫດຮ້າຍຕໍ່ພວກກິເລອາດ

4 ດັ່ງນັ້ນ ເຮົາຈະເຮັດໃຫ້ໄຟໄຫມ້ຣາຊອານາຈັກຊີເຣັຽ (ຣາຊາເອນ)  ແລະພຣະຣາຊວັງຂອງເຈົ້າຊີວິດເບນຮາດັດ

5 ເຮົາຈະທຳລາຍປະຕູເມືອງດາມັສກັສໃຫ້ແຕກທະລາຍລົງ ເຮົາຈະຂັບໄລ່ພວກຜູ້ປົກຄອງຮ່ອມພູອາເວນ ແລະເບດ
ເອເດນອອກຫນີ ແລ້ວພວກຊີເຣັຽຈະຖືກກວາດລ້າງໄປເປັນຊະເລີຍຢູ່ໃນເມືອງ ກີ

**ປະເທດຟີລິສຕິນ**

6 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ພວກກາຊາໄດ້ທຳຜິດຕື່ມຂຶ້ນຢູ່ເລື້ອຍໆ ເຮົາຈະລົງໂທດພວກເຂົາຢ່າງແນ່ນອນ ກໍຍ້ອນ
ວ່າພວກເຂົາຍາດເອົາຊົນຊາດອື່ນໆ

7 ແລ້ວມອບເຂົາໄວ້ໃນກຳມືຂອງຊາວເອໂດມ ດັ່ງນັ້ນ ເຮົາຈະເຮັດໃຫ້ກຳແພງເມືອງກາຊາ

8 ຮວມທັງພຣະຣາຊວັງຂອງເມືອງອັສໂດດ ແລະເມືອງອັສເກໂຣນອອກຫນີ ເຮົາຈະໃຊ້ກຳລັງຕໍ່ສູ້ເມືອງເອກໂຣນ ແລະ
ຊາວຟີລິສຕິນທຸກຄົນທີ່ຍັງເຫລືອຢູ່ນັ້ນຕ້ອງຕາຍ”

**ເມືອງຕີເຣ**

9 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຊາວເມືອງຕີເຣໄດ້ເຮັດຜິດຕື່ມຂຶ້ນຢູ່ເລື້ອຍໆ ເຮົາຈະລົງໂທດພວກເຂົາຢ່າງແນ່ນອນ
ເພາະວ່າພວກເຂົາໄດ້ຈັບປະຊາຊົນໄປເປັນຊະເລີຍທີ່ເມືອງເອໂດມ ພວກເຂົາບໍ່ໄດ້ຖືສັນຍາມິດຕະພາບທີ່ພວກເຂົາ
ໄດ້ເຮັດເອົາໄວ້ກັບປະຊາຊົນເຫລົ່ານີ້

10 ດັ່ງນັ້ນ ເຮົາຈະເຮັດໃຫ້ກຳແພງເມືອງຕີເຣ ຮວມທັງພຣະຣາຊວັງຂອງເມືອງນັ້ນຖືກເຜົາຜານທຳລາຍດ້ວຍໄຟອຸບາດ

**ປະເທດເອໂດມ**

11 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຊາວເອໂດມໄດ້ເຮັດຜິດຕື່ມຂຶ້ນຢູ່ເລື້ອຍໆ ເຮົາຈະລົງໂທດພວກເຂົາຢ່າງແນ່ນອນ ກໍ
ຍ້ອນວ່າພກວເຂົາໄດ້ໄລ່ຕິດຕາມຂ້າຍາດຕີພີ່ນ້ອງຂອງເຂົາ ຄືອິສຣາເອນ ພວກເຂົາຂາດຄວາມເມດຕາຈິດ ແລະບໍ່
ຍອມລະຖິ້ມຄວາມໂທດຮ້າຍຂອງພວກເຂົາຈັກເທື່ອ
12 ດັ່ງນັ້ນ ເຮົາຈະເຮັດໃຫ້ໄຟໄຫມ້ ເຕມານ ແລະຈູດທຳລາຍພຣະຣາຊວັງຂອງເມືອງໂບຊຣາ

**ຊາວອັມໂມນ**

13 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຊາວອັມໂມນໄດ້ທຳຜິດຕື່ມຂຶ້ນຢູ່ເລື້ອຍໆ ເຮົາຈະລົງໂທດພວກເຂົາຢ່າງແນ່ນອນ ກໍ
ຍ້ອນວ່າພວກເຂົາຜ່າຕັດທ້ອງຜູ້ຍິງແມ່ມານໃນເມືອງກິເລອາດ ແລະໂລບເອົາດິນແດນຂອງແຂວງນັ້ນ
14 ດັ່ງນັ້ນ ເຮົາຈະເຮັດໃຫ້ກຳແພງເມືອງຣັບບາ ຮວມທັງພຣະຣາຊວັງຂອງເມືອງນັ້ນຖືກເຜົາຜານທຳລາຍດ້ວຍໄຟອຸບາດ
ໃນມື້ຂອງການສູ້ຮົບຈະມີສຽງໂຮ່ຮ້ອງກ້ອງສະຫນັ່ນ ແລະການສູ້ຮົບຈະດຸເດືອດດັ່ງລົມພະຍຸ
15 ຄັນແລ້ວເຈົ້າຊີວິດພ້ອມທັງນາຍທະຫານທັງຫມົດຂອງເຂົາ ກໍຈະກາຍໄປເປັນຊະເລີຍເສິກ”

2

**ປະເທດໂມອາບ**

Moab

1 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຊາວໂມອາບໄດ້ເຮັດຜິດຕື່ມຂຶ້ນຢູ່ເລື້ອຍໆ ເຮົາຈະລົງໂທດພວກເຂົາຢ່າງແນ່ນອນ ກໍ
ຍ້ອນວ່າພວກເຂົາເຜົາກະດູກເຈົ້າຊີວິດປະເທດເອໂດມຈົນເປັນຝຸ່ນຄືປູນ
2 ເຮົາຈະເຮັດໃຫ້ໄຟໄຫມ້ພຣະຣາຊວັງຂອງເມືອງເກຣິໂອທປະເທດໂມອາບ ແລະຊາວໂມອາບຈະຕາຍໄປໃນຖ້າມ
ກາງອຶກກະທຶກຄຶກໂຄມ ຂອງການສູ້ຮົບ ສ່ວນພວກທະຫານກໍໂຮ່ຮ້ອງໂວຍວາຍ ແລະສຽງແກດັ່ງສະຫນັ່ນຫວັ່ນໄຫວ
ຂຶ້ນ
3 ແລ້ວເຮົາຈະຂ້າຜູ້ປົກຄອງປະເທດໂມອາບ ພ້ອມທັງຜູ້ນຳທຸກໆຄົນໃນປະເທດນັ້ນ

**ປະເທດຢູດາ**

Judgment on Judah

4 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຊາວຢູດາໄດ້ເຮັດຜິດຕື່ມຂຶ້ນຢູ່ເລື້ອຍໆ ເຮົາຈະລົງໂທດພວກເຂົາຢ່າງແນ່ນອນ ກໍຍ້ອນ
ວ່າພວກເຂົາປມາດຂໍ້ບັນຍັດແລະບໍ່ຖືຮັກສາຄຳສັ່ງຂອງເຮົາ ພວກເຂົາຫລົງເດີນທາງຜິດ ຄືຕິດຕາມພຣະອື່ນທີ່ພວກ
ບັນພະບຸຣຸດເຄີຍຖືມາ
5 ດັ່ງນັ້ນ ເຮົາຈະເຮັດໃຫ້ໄຟໄຫມ້ພຣະຣາຊວັງກຸງເຢຣູຊາເລັມ ໃນຣາຊອານາຈັກຢູດານີ້

**ພຣະເຈົ້າຊົງຕັດສິນປະເທດອິສຣາເອນ**

Judgment on Israel

6 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ພວກອິສຣາເອນໄດ້ເຮັດຜິດຕື່ມຂຶ້ນຢູ່ເລື້ອຍໆ ເຮົາຈະລົງໂທດພວກເຂົາຢ່າງແນ່ນອນ ກໍ
ຍ້ອນວ່າພວກເຂົາຂາຍຄົນຊອບທັມທີ່ພຽງແຕ່ເປັນຫນີ້ເຂົາເທົ່ານັ້ນ ແລະຂາຍຄົນທຸກຍາກໄປເປັນທາດ ເພາະວ່າເຂົາ
ບໍ່ມີເງິນຄ່າເກີບພຽງຄູ່ດຽວ
7 ພວກເຂົາຢຽບຢ່ຳຜູ້ທີ່ອ່ອນແອ ແລະຜູ້ທີ່ສິ້ນເນື້ອປະດາຕົວ ພ້ອມທັງລັກໂລບເອົາທີ່ທຳມາຫາກິນຂອງຄົນທຸກຈົນ
ສ່ວນພວກຄົນຫນຸ່ມແລະຄົນເຖົ້າແກ່ກໍພາກັນໄປພົບຍິງໂສເພນີທີ່ວິຫານ ຊຶ່ງເປັນການຫມິ່ນປມາດນາມຊື່ອັນບໍຣິສຸດ
ຂອງເຮົາ
8 ໃນສະຖານທີ່ນະມັສການ ພວກເຂົາພາກັນນອນເຕັງເສື້ອຜ້າທີ່ຄົນມາຈຳນຳ ແລະໄດ້ໂລບເອົາເຫລົ້າອະງຸ່ນຈາກລູກ
ຫນີ້ມາດື່ມພາຍໃນວິຫານ
9 ຍ້ອນພວກເຂົາເຫລົ່ານີ້ແຫລະ, ເຮົາຈຶ່ງໄດ້ທຳລາຍຊາວອາໂມຣິດທີ່ສູງດັ່ງຕົ້ນໄມ້ ແລະແຂງດັ່ງຕົ້ນກໍໃຫ້ຫມົດສິ້ນໄປ

10 ປະຊາຊົນຂອງເຮົາເອີຍ, ເຮົາໄດ້ນຳພວກເຈົ້າອອກມາຈາກປະເທດເອຢິບ ໂດຍພາພວກເຈົ້າທ່ອງທ່ຽວໄປມາໃນຖິ່ນ
ກັນດານເປັນເວລາສີ່ສິບປີ ແລ້ວເຮົາໄດ້ມອບແຜ່ນດິນຂອງຊາວອາໂມຣິດໃຫ້ເປັນກຳມະສິດຂອງພວກເຈົ້າ
11 ເຮົາໄດ້ເລືອກເອົາລູກຊາຍຂອງພວກເຈົ້າບາງຄົນໃຫ້ເປັນຜູ້ປະກາດພຣະທັມ ແລະໃຫ້ຊາຍໜຸ່ມບາງຄົນໃນພວກເຈົ້າ
ເປັນຄົນນາຊີຣີ ຊາວອິສຣາເອນເອີຍ, ສິ່ງນີ້ເປັນຄວາມຈິງຫລືບໍ? ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ
12 ແຕ່ວ່າພວກເຈົ້າໃຫ້ຄົນນາຊີຣີດື່ມເຫລົ້າ ແລະຫ້າມປາມພວກຜູ້ປະກາດພຣະທັມບໍ່ໃຫ້ປະກາດຂ່າວຂອງເຮົາ
13 ແລະບັດນີ້ ເຮົາຈະບີບບັງຄັບພວກເຈົ້າດັ່ງກວຽນໃສ່ເຂົ້າໜັກຢຽບເຕັງດິນ
14 ໃນມື້ນັ້ນ ພວກທີ່ແລ່ນວ່ອງໄວກໍບໍ່ສາມາດແລ່ນໜີພົ້ນໄປໄດ້ ຜູ້ທີ່ແຂງແຮງກໍຈະສູນເສັຽກຳລັງ ແລະພວກທີ່ອົງອາດ
ກ້າຫານກໍບໍ່ສາມາດຊ່ອຍຊີວິດຂອງຕົນເອງໃຫ້ພົ້ນພັຍໄດ້
15 ສ່ວນຄົນຍິງທະນູກໍບໍ່ສາມາດຢືນຢູ່ໃນສະຖານທີ່ຂອງຕົນເອງໄດ້ ນັກແລ່ນໄວກໍບໍ່ໜີຫລົບໄປໄດ້ ແລະຄົນຂີ່ມ້າກໍບໍ່
ສາມາດຫອບເອົາຊີວິດຂອງຕົນຫລົບໄປໄດ້ເຊັ່ນດຽວ
16 ແມ່ນແຕ່ທະຫານຜູ້ອົງອາດກ້າຫານທີ່ສຸດກໍຕ້ອງເປືອຍຕົວປົບໜີໄປ" ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ແຫລະ

## 3

Israel’s Guilt and Punishment

1 ຊາວອິສຣາເອນທັງຫລາຍເອີຍ, ຈົ່ງຟັງຄຳທີ່ພຣະຜູ້ເປັນເຈົ້າຊົງກ່າວໄວ້ກ່ຽວກັບພວກເຈົ້າວ່າ, "ເຈົ້າເປັນຄອບຄົວຂອງ
ເຮົາ ທີ່ເຮົາໄດ້ນຳອອກມາຈາກປະເທດເອຢິບໃນຈຳນວນຄອບຄົວທັງຫລາຍໃນໂລກນີ້
1 ພວກເຈົ້າເປັນຄອບຄົວດຽວທີ່ເຮົາຮູ້ຈັກແລະໄດ້ປົກປັກຮັກສາມາ ສະນັ້ນເຮົາຈະລົງໂທດພວກເຈົ້າ ຍ້ອນຄວາມຜິດທັງ
ຫລາຍທີ່ພວກເຈົ້າໄດ້ເຮັດ"

**ວຽກງານຂອງຜູ້ປະກາດພຣະທັມ**

2 ສອງຄົນທີ່ອອກເດີນທາງໄປນຳກັນໂດຍປາສຈາກການຕົກລົງກັນກ່ອນຈະໄດ້ຫລືບໍ?
3 ຖ້າສິງບໍ່ໄດ້ພົບເຫຍື່ອ ມັນຈະຮ້ອງບໍ? ສິງໜຸ່ມຈະຮ້ອງຄາງໃນຖ້ຳຫລືບໍ ຖ້າມັນບໍ່ໄດ້ຈັບຄຸບສິ່ງໃດ?
4 ນົກຈະຖືກກັບດັກເທິງດິນໄດ້ບໍ ຖ້າບໍ່ມີເຫຍື່ອລໍ້ມັນ? ກັບດັກຈະລັ່ນບໍ ຖ້າວ່າບໍ່ມີສິ່ງໃດເຂົ້າໄປໃນກັບນັ້ນ?
5 ສຽງແກບຸກໂຈມຕີດັງຂຶ້ນໃນກາງເມືອງ ໂດຍບໍ່ໃຫ້ປະຊາຊົນຢ້ານກົວຈະເປັນໄປໄດ້ບໍ? ເຫດການອັນໜ້າຢ້ານເກີດ
ຂຶ້ນໃນເມືອງນຶ່ງ ໂດຍທີ່ພຣະຜູ້ເປັນເຈົ້າບໍ່ໄດ້ຊົງກະທຳຈະເປັນໄປໄດ້ບໍ?
6 ຕາມຈິງແລ້ວ ພຣະຜູ້ເປັນເຈົ້າບໍ່ໄດ້ກະທຳສິ່ງໃດ ໂດຍບໍ່ໄດ້ບອກແຜນການຂອງພຣະອົງໃຫ້ຜູ້ປະກາດພຣະທັມ ຊຶ່ງ
ເປັນຜູ້ຮັບໃຊ້ຂອງພຣະອົງຮູ້ກ່ອນ
7 ເມື່ອໄດ້ຍິນສຽງສິງຮ້ອງຂຶ້ນ ແມ່ນໃຜຈະລະງັບຄວາມຢ້ານໄວ້ໄດ້? ເມື່ອພຣະຜູ້ເປັນເຈົ້າຊົງບອກແລ້ວ ໃຜຈະກ້າປະຕິ
ເສດການປະກາດພຣະທັມຂອງພຣະອົງ?

**ກຸງຊາມາເຣັຽຖືກພິນາດຈິບຫາຍ**

8 ຈົ່ງຖແລງຖ້ອຍຄຳໃຫ້ຜູ້ທີ່ຢູ່ໃນພຣະຣາຊວັງເມືອງອັສໂດດ ແລະປະເທດເອຢິບຊາບວ່າ, "ຈົ່ງພາກັນທ້ອນໂຮມຢູ່ກຸງ
ຊາມາເຣັຽເສັຽກ່ອນ ເພື່ອພິຈາຣະນາເບິ່ງເຫດການວຸ້ນວາຍອັນຍິ່ງໃຫຍ່ຢູ່ທີ່ນັ້ນ ພ້ອມທັງການກົດຂີ່ຂົ່ມເຫັງທີ່ມີຢູ່ໃນ
ເມືອງນັ້ນ"
9 ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ປະຊາຊົນເຫລົ່ານີ້ໄດ້ຢູ່ໃນຫໍໂຮງຫລັງໃຫຍ່ທີ່ເຕັມໄປດ້ວຍເຄື່ອງຂອງທີ່ປຸ້ນແລະລັກເອົາ
ມາ ພວກເຂົາບໍ່ຮູ້ຈັກປະພຶດຕົວຢ່າງສັດຊື່ເລີຍ
10 ເພາະສະນັ້ນ ພວກສັດຕຣູຈະມາອ້ອມປະເທດຂອງເຂົາ ແລະທຳລາຍກຳແພງປ້ອງກັນ ແລ້ວປຸ້ນເອົາສິ່ງຂອງໃນຫໍ
ໂຮງຫລັງໃຫຍ່ນັ້ນໄປ"

11 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເມື່ອແກະຕົວນຶ່ງຖືກສິງກັດກິນ ຜູ້ລ້ຽງແກະຍາດເອົາພຽງແຕ່ຂາສອງເບື້ອງແລະຫູໃບນຶ່ງ
ໄດ້ສັນໃດ ຝ່າຍພຣະເຈົ້າກໍຈະຊ່ອຍເຫລືອຊາວອິສຣາເອນພຽງແຕ່ສ່ວນນ້ອຍໆທີ່ອາສັຍຢູ່ໃນກຸງຊາມາເຣັຽໃຫ້ພົ້ນພັຍ
ໄດ້ສັນນັ້ນ”
12 ພຣະເຈົ້າແຫ່ງຈັກກະວານຊົງກ່າວວ່າ, “ບັດນີ້ຈົ່ງຟັງແລະບອກເຕືອນເຊື້ອສາຍຂອງຢາໂຄບວ່າ
13 ໃນມື້ທີ່ເຮົາລົງໂທດພວກອິສຣາເອນຍ້ອນຄວາມບາບຂອງເຂົາ ເຮົາຈະທຳລາຍແທ່ນບູຊາຂອງເມືອງເບັດເອນ ຄືທຳ
ລາຍແຈທັງສີ່ຂອງແທ່ນນັ້ນ
14 ເຮົາຈະທຳລາຍເຮືອນພັກຣະດູໜາວ ແລະເຮືອນພັກຣະດູຮ້ອນ ສ່ວນເຮືອນທີ່ຕົກແຕ່ງດ້ວຍງາຈະລົ້ມລົງເປັນເຮືອນ
ຮ້າງ ແລະເຮືອນໃຫຍ່ທຸກໆຫລັງຈະຖືກທຳລາຍ”

# 4

Chapter 4

1 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຍິງຊາວຊາມາເຣັຽເອີຍ ຈົ່ງຟັງເທີນ ພວກເຈົ້າໄດ້ອ້ວນພີເຫມືອນງົວທີ່ລ້ຽງໄວ້ຢ່າງດີ
ພວກເຈົ້າຂົ່ມເຫັງຄົນອ່ອນແອ ຢຽບຢ່ຳຄົນຈົນ ແລະບອກຜົວໃຫ້ເອົາເຫລົ້າມາກິນ”
2 ຍ້ອນພຣະຜູ້ເປັນເຈົ້າຊົງບໍຣິສຸດ ພຣະອົງຈຶ່ງຊົງກ່າວຢ່າງເດັດຂາດວ່າ “ວັນທັງຫລາຍຈະມາເຖິງຢ່າງແນ່ນອນ ຄືພວກ
ສັດຕຣູຈະເອົາຂໍເກາະລາກແກ່ພວກເຈົ້າໄປ ແຕ່ລະຄົນໃນພວກເຈົ້າຈະເປັນເຫມືອນປາຖືກເບັດ
3 ແລ້ວພວກເຈົ້າຈະຖືກໂຍນອອກໄປທາງບ່ອນກຳແພງທີ່ແຕກເພ ແລະຈະຖືກໂຍນຖິ້ມອອກນອກ” ນີ້ແຫລະ, ຄື
ຖ້ອຍຄຳທີ່ພຣະຜູ້ເປັນເຈົ້າຊົງກ່າວໄວ້

**ພວກອິສຣາເອນບໍ່ເຂົ້າໃຈຄຳສອນຂອງພຣະຜູ້ເປັນເຈົ້າ**

4 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຊາວອິສຣາເອນເອີຍ, ໃຫ້ພາກັນໄປເຮັດຜິດສາ ຄືເຮັດໃນສະຖານທີ່ສັກສິດທີ່ເມືອງເບັດ
ເອນ ແລະໄປເຮັດຜິດທີ່ເມືອງກິນການຫລາຍກວ່າເກົ່າອີກ ໃຫ້ພວກເຈົ້ານຳເອົາສັດມາຖວາຍທຸກໆມື້ໃນຕອນເຊົ້າ
ແລະທຸກໆສາມມື້ໃດໃຫ້ນຳເອົາສິ່ງຂອງນຶ່ງສ່ວນສິບຂອງເຈົ້າເຂົ້າມາຖວາຍຄືກັນ
5 ໃຫ້ເອົາເຂົ້າຈີ່ມາຖວາຍເປັນການຂອບພຣະຄຸນແລະໃຫ້ຖວາຍຕາມໃຈສມັກຂອງພວກເຈົ້າສາ ເພາະພວກເຈົ້າອວດ
ຕົວ ແລະການ ເຮັດຢ່າງນີ້ມັນກໍຖືກໃຈພວກເຈົ້າ”

Israel Rejects Correction

6 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ແມ່ນເຮົາຜູ້ດຽວເທົ່ານັ້ນທີ່ນຳເອົາຄວາມອຶດຢາກມາສູ່ເມືອງທັງຫລາຍຂອງພວກເຈົ້າ
ເພື່ອວ່າບໍ່ໃຫ້ພວກເຈົ້າມີອາຫານກິນ ແຕ່ພວກເຈົ້າກໍບໍ່ຍອມກັບຄືນມາຫາເຮົາ
7 ເຮົາບໍ່ໄດ້ອະນຸຍາດໃຫ້ຝົນຕົກຕາມຕົ້ນເຂົ້າຕ້ອງການ ເຮົາໄດ້ເຮັດໃຫ້ຝົນຕົກລົງໃສ່ແຕ່ບາງເມືອງເທົ່ານັ້ນ ໂດຍບໍ່ໃຫ້
ຕົກໃສ່ເມືອງອື່ນ ສ່ວນຕາມທົ່ງນາກໍຈະຖືກຝົນຕົກລົງເປັນບາງບ່ອນ ແຕ່ວ່າບ່ອນໃດທີ່ບໍ່ມີນ້ຳຝົນ ພືນລະປູກກໍບໍ່ງອກ
ງາມຂຶ້ນໄດ້ ຍ້ອນຂາດນ້ຳ
8 ປະຊາຊົນໃນສອງສາມຫົວເມືອງກໍພາກັນໄປຊອກຫາດື່ມນ້ຳໃນເມືອງໃກ້ຄຽງ ແຕ່ນ້ຳກໍບໍ່ມີພຽງພໍຈະກິນ ແຕ່ເຖິງປານ
ນັ້ນ ພວກເຈົ້າກໍຍັງບໍ່ກັບຄືນມາຫາເຮົາ”
9 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເຮົາໄດ້ໃຫ້ພຍາດນາໆຊະນິດຂອງຕົ້ນໄມ້ ຄືເພັ້ຽດຳແລະເພັ້ຽແດງມາທຳລາຍພືນລະປູກ
ຂອງພວກເຈົ້າ ຝູງຕັກແຕນໄດ້ກິນຜັກແລະຕົ້ນອະງຸ່ນຂອງພວກເຈົ້າ ພ້ອມທັງຕົ້ນເດື່ອເທດ ຕົ້ນຫມາກກອກ ແຕ່ເຖິງ
ປານນັ້ນພວກເຈົ້າກໍຍັງບໍ່ກັບຄືນມາຫາເຮົາ
10 ເຮົາໄດ້ເຮັດໃຫ້ໂຣກລະບາດຕົກຖ້ານກາງພວກເຈົ້າ ດັ່ງທີ່ເຮົາໄດ້ເຮັດກັບພວກເອຢິບມາຄັ້ງນຶ່ງແລ້ວ ເຮົາໄດ້ຂ້າຊາຍ
ຫນຸ່ມຫລາຍຄົນໃນສນາມຮົບແລະຈັບເອົາມ້າຂອງພວກເຈົ້າ ພາຍໃນຄ້າຍພັກອາສັຍຂອງພວກເຈົ້າ ເຮົາໄດ້ເຮັດໃຫ້
ເກີດມີກິ່ນເຫມັນເພື່ອໃຫ້ພວກເຈົ້າດົມ ແຕ່ເຖິງປານນັ້ນ ພວກເຈົ້າກໍຍັງບໍ່ກັບຄືນມາຫາເຮົາ

11 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເຮົາໄດ້ທຳລາຍບາງຄົນໃນພວກເຈົ້າ ດັ່ງທຳລາຍເມືອງໂຊໂດມແລະເມືອງໂກໂມຣາ
ພວກເຈົ້າປຽບເຫມືອນດົ້ນຟືນທີ່ເອົາມາຈາກກອງໄຟກຳລັງໄຫມ້ຢູ່ ເຖິງປານນັ້ນພວກເຈົ້າກໍຍັງບໍ່ກັບຄືນມາຫາເຮົາ
12 ດັ່ງນັ້ນ ຊາວອິສຣາເອນເອີຍ, ເຮົາກຳລັງຈະກະທຳສິ່ງເຫລົ່ານີ້ກັບພວກເຈົ້າ ດ້ວຍເຫດນີ້ ພວກເຈົ້າຈຶ່ງຕຽມຕົວເຂົ້າເຝົ້າ
ຊ້ອງພຣະພັກແຫ່ງການພິພາກສາຂອງພຣະເຈົ້າຂອງພວກເຈົ້າ”
13 ພຣະເຈົ້າເປັນພຣະຜູ້ສ້າງພູທັງຫລາຍແລະບັນດານໃຫ້ເກີດລົມ ພຣະອົງຊົງໃຫ້ມະນຸດຮູ້ຈັກຄວາມຄິດຂອງພຣະອົງ
ຊົງປ່ຽນກາງເວັນໃຫ້ເປັນກາງຄືນ ຊົງເປັນມະຫາກະສັດປົກຄອງທົ່ວທັງໂລກນີ້ ພຣະນາມຂອງພຣະອົງແມ່ນພຣະຜູ້
ເປັນເຈົ້າຈັກກະວານ

## 5 ພຣະຜູ້ເປັນເຈົ້າຮຽກຮ້ອງໃຫ້ອິສຣາເອນກັບໃຈ

A Lament for Israel’s Sin

1 ຊາວອິສຣາເອນເອີຍ, ຈົ່ງຟັງເພງໄວ້ອາໄລນີ້ເທີນ
2 “ອິສຣາເອນເຫມືອນຍິງສາວທີ່ລົ້ມແລ້ວຈະລຸກຂຶ້ນມາອີກບໍ່ໄດ້ ນາງນອນຢຽດຢູ່ເທິງດິນໂດຍບໍ່ມີຜູ້ໃດຊ່ອຍດຶງລຸກ
ຂຶ້ນ”
3 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເມືອງນຶ່ງໃນອິສຣາເອນ ທ່ານໄດ້ສົ່ງທະຫານພັນຄົນອອກໄປ ແຕ່ມີພຽງຮ້ອຍຄົນເທົ່ານັ້ນ
ທີ່ກັບຄືນມາ ແລະເມືອງອື່ນໆກໍສົ່ງທະຫານຮ້ອຍຄົນອອກໄປ ແຕ່ມີພຽງສິບຄົນເທົ່ານັ້ນທີ່ໄດ້ກັບຄືນມາ”
4 ພຣະຜູ້ເປັນເຈົ້າຊົງກ່າວວ່າຕໍ່ພວກອິສຣາເອນວ່າ, “ຈົ່ງມາຫາເຮົາ ແລະພວກເຈົ້າຈະມີຊີວິດຢູ່
5 ຢ່າພາກັນໄປນະມັສການທີ່ເມືອງເບເອີເຊບາ ແລະຢ່າໄປຊອກຫາເຮົາທີ່ເບັດເອນ ເພາະວ່າເບັດເອນຈະບໍ່ມີ ຢ່າໄປ
ເມືອງກິນການ ເພາະວ່າຄົນໃນເມືອງນັ້ນໄດ້ຖືກເນຣະເທດຫນີຫມົດແລ້ວ”
6 ຊາວໂຢເຊັບເອີຍ, ຈົ່ງໄປຫາພຣະຜູ້ເປັນເຈົ້າ ແລ້ວພວກເຈົ້າຈະມີຊີວິດຢູ່ ຖ້າວ່າພວກເຈົ້າບໍ່ຍອມໄປ ພຣະອົງຈະກຳ
ຈັດພວກເຈົ້າເຫມືອນໄຟເຜົາຜານ ໄຟນັ້ນຈະລຸກໄຫມ້ຊາວເບັດເອນ ແລະບໍ່ມີໃຜຈະມອດມັນໄດ້
7 ຄວາມທຸກລຳບາກຈະເກີດຂຶ້ນກັບພວກເຈົ້າ ຜູ້ທີ່ບໍ່ສັດຊື່ແລະຜູທີ່ເຮັດໃຫ້ຜູ້ຖືກກາຍເປັນຜູ້ຜິດ
8 ພຣະຜູ້ເປັນເຈົ້າຊົງສ້າງດວງດາວ ເປັນຕົ້ນວ່າດາວລູກໄກ່ ແລະດາວໄຖ ພຣະອົງຊົງໃຫ້ຄວາມມືດກັບກາຍເປັນຄວາມ
ສວ່າງ ແລະໃຫ້ກາງເວັນກາຍເປັນກາງຄືນ ແລ້ວພຣະອົງຊົງເອີ້ນເອົານ້ຳຂຶ້ນມາຈາກທະເລ ແລະຊົງຖອກເທນ້ຳນັ້ນລົງ
ເທິງແຜ່ນດິນໂລກ ພຣະອົງຊົງພຣະນາມວ່າພຣະຜູ້ເປັນເຈົ້າ
9 ພຣະອົງຊົງນຳເອົາການທຳລາຍມາສູ່ບ່ອນຍາມປ້ອງກັນ ແລະທີ່ຫມັ້ນອັນສຳຄັນ
10 ພວກເຈົ້າໄດ້ກຽດຊັງຜູ້ທີ່ຍຶດຫມັ້ນຢູ່ໃນຄວາມຊອບທັມ ແລະຜູ້ທີ່ໃຫ້ການຕາມຄວາມຈິງທຸກຢ່າງຢູ່ໃນສານ
11 ພວກເຈົ້າໄດ້ຂົ່ມເຫັງຄົນທຸກຍາກ ແລະລັກເອົາເຂົ້າຂອງພວກເຂົາ ດ້ວຍເຫດນີ້ ພວກເຈົ້າຈຶ່ງໄດ້ກໍ່ເຮືອນໄວ້ແຕ່ບໍ່ມີໂອ
ກາດຈະໄດ້ຢູ່ ຫລືບໍ່ໄດ້ດື່ມນ້ຳອະງຸ່ນທີ່ມາຈາກສວນທີ່ພວກເຈົ້າປູກໄວ້
12 ເພາະເຮົາຮູ້ຈັກວ່າຄວາມບາບຂອງພວກເຈົ້າ ຄືຄວາມຊົ່ວຊ້າທີ່ພວກເຈົ້າໄດ້ສ້າງຂຶ້ນມານັ້ນຮ້າຍແຮງຫລາຍທີ່ສຸດ
ພວກເຈົ້າບຽດບຽນຄົນດີຮັບເງິນສິນບົນແລະບໍ່ໃຫ້ຄວາມຍຸດຕິທັມແກ່ຄົນທຸກຈົນຢູ່ໃນສານ
13 ສມັຍນີ້ເປັນສມັຍຊົ່ວຊ້າ ສະນັ້ນພວກທີ່ມີຄວາມສລາດຫລັກແຫລມຈຶ່ງຕ້ອງມິດງຽບຢູ່
14 ເພື່ອພວກເຈົ້າຈະມີຊີວິດຢູ່ຕໍ່ໄປ ຈົ່ງພຍາຍາມເຮັດແຕ່ໃນສິ່ງທີ່ຖືກຕ້ອງ ແລະຢ່າສແວງຫາຄວາມຊົ່ວ ແລ້ວພຣະເຈົ້າ
ແຫ່ງຈັກກະວານຈະຊົງສະຖິດຢູ່ກັບພວກເຈົ້າ ຕາມທີ່ພວກເຈົ້າໄດ້ເວົ້າອ້າງເຖິງພຣະອົງ
15 ຈົ່ງກຽດຊັງຄວາມຊົ່ວແລະຮັກແຕ່ຄວາມດີ ແລ້ວໃຫ້ການຢ່າງສັດຊື່ຢູ່ໃນສານ ບາງທີພຣະເຈົ້າແຫ່ງຈັກກະວານຈະຊົງ
ເມດຕາຕໍ່ເຊື້ອສາຍໂຢເຊັບທີ່ຍັງເຫລືອຢູ່ນີ້

16 ດັ່ງນັ້ນພຣະຜູ້ເປັນເຈົ້າແຫ່ງຈັກກະວານຈຶ່ງຊົງກ່າວວ່າ, “ຕໍ່ໄປຕາມຖະໜົນຕ່າງໆໃນເມືອງຈະມີແຕ່ການຮ້ອງໄຫ້ ແລະ
ຄວນຄາງດ້ວຍຄວາມທຸກລຳບາກ ພວກເຂົາຈະເອີ້ນຄົນຕາມເຂດຊົນນະບົດ ມາຮ່ວມຮ້ອງໄຫ້ຄວນຄາງດ້ວຍກັນກັບ
ຜູ້ທີ່ຮັບຈ້າງຮ້ອງໄຫ້ນັ້ນ
17 ແລ້ວການຮ້ອງໄຫ້ຄວນຄາງກໍຈະເກີດຂຶ້ນໃນສວນອະງຸ່ນທຸກໆແຫ່ງ ເພາະວ່າເຮົາຈະມາລົງໂທດພວກເຈົ້າ” ພຣະຜູ້
ເປັນເຈົ້າຊົງກ່າວໄວ້ດັ່ງນີ້

The day of the LORD a Dark Day

18 ໃນມື້ນັ້ນ ຄວາມທຸກລຳບາກຈະເກີດຂຶ້ນ ແກ່ຜູ້ທີ່ຄອຍຖ້າວັນຂອງພຣະຜູ້ເປັນເຈົ້າ ມື້ນັ້ນຈະມີຫຍັງດີສຳລັບພວກເຈົ້າ
ເພາະວ່າມື້ນັ້ນຈະເປັນມື້ແຫ່ງຄວາມມືດມົນ ແລະບໍ່ແມ່ນມື້ແຫ່ງແສງສວ່າງ
19 ມື້ນັ້ນຈະເປັນເໝືອນຄົນທີ່ແລ່ນປົບໜີຈາກສິງແລ້ວໄປພົບໝີ ຫລືກັບຄືນເມືອເຮືອນແລ້ວເອົາມືຍັນໃສ່ຝາເຮືອນ
ຖືກງູກັດ
20 ມື້ຂອງພຣະຜູ້ເປັນເຈົ້າຈະນຳເອົາຄວາມມືດມົນມາ ບໍ່ແມ່ນນຳເອົາແສງສວ່າງ ມັນເປັນມື້ແຫ່ງຄວາມໂສກເສົ້າໂດຍບໍ່
ມີແສງສວ່າງເກີດຂຶ້ນເລີຍ
21 ເຮົາກຽດຊັງງານສລອງສາສນາຂອງພວກເຈົ້າ ເຮົາບໍ່ພໍໃຈໃນການຢ່າງນີ້
22 ເວລາເຈົ້ານຳເອົາເຄື່ອງເຜົາບູຊາແລະຜົນລະປູກມາຖວາຍໃຫ້ເຮົາ ເຮົາຈະບໍ່ຍອມຮັບເອົາ ແລະສັດໂຕຕຸ້ຍໆທີ່ພວກ
ເຈົ້ານຳມາ ຖວາຍບູຊາຂອບພຣະຄຸນ ເຮົາກໍຈະບໍ່ຍອມຮັບເອົາ
23 ຈົ່ງເຊົາຮ້ອງເພງ ເຮົາບໍ່ຢາກຟັງເຄື່ອງເສບດົນຕຣີຂອງພວກເຈົ້າ
24 ຈົ່ງໃຫ້ຄວາມສັດຊື່ ແລະຄວາມຊອບທັມຫລັ່ງໄຫລໄປຢ່າງສະບາຍ ເໝືອນດັ່ງສາຍລຳນ້ຳທີ່ບໍ່ມີວັນແຫ້ງໝົດໄປ
25 ຊາວອິສຣາເອນເອີຍ, ໃນເວລາຢູ່ໃນຖິ່ນກັນດານສີ່ສິບປີນັ້ນ ພວກເຈົ້າບໍ່ໄດ້ນຳເອົາເຄື່ອງບູຊາຖວາຍແກ່ເຮົາແມ່ນບໍ?
26 ແຕ່ຕໍ່ໄປນີ້ພວກເຈົ້າຈະຖືເອົາຮູບໂຄຣົບ ຄືຊັກກຸດ ແລະໄກວານ ຊຶ່ງພວກເຈົ້າໄດ້ສ້າງຂຶ້ນມາສຳລັບຕົນເອງ
27 ແລະເຮົາຈະເນຣະເທດພວກເຈົ້າອອກໜີໄປກາຍເມືອງດາມັສກັສ” ພຣະຜູ້ເປັນເຈົ້າຜູ້ຊົງພຣະນາມວ່າ ພຣະເຈົ້າ
ແຫ່ງຈັກກະວານໄດ້ຊົງກ່າວໄວ້ດັ່ງນີ້ແຫລະ

## 6 ພວກອິສຣາເອນຖືກທຳລາຍ

Complacent Self-indulgence Will Be Punished

1 ພວກເຈົ້ານາຍໃນຣາຊອານາຈັກອັນຍິ່ງໃຫຍ່ຂອງອິສຣາເອນ ຄືຜູ້ທີ່ໃຊ້ຊີວິດຢ່າງສນຸກສະບາຍໃນເມືອງຊີໂອນ ຜູ້ທີ່ຢູ່
ຢ່າງປອດພັຍທີ່ກຸງຊາມາເຣັຽ ແລະຜູ້ທີ່ປະຊາຊົນໄດ້ໄປຂໍຄວາມຊ່ອຍເຫລືອ ຈະໄດ້ຮັບຄວາມທຸກຍາກລຳບາກ ຈົ່ງໄປ
ເບິ່ງເມືອງການເນແລະນະຄອນຮາມັທ
2 ແລ້ວລົງໄປເມືອງກາດ ຊຶ່ງເປັນເມືອງຂອງພວກຟີລິສຕິນ ບ່ອນເຫລົ່ານີ້ດີກວ່າຣາຊອານາຈັກຢູດາແລະອິສຣາເອນຫລື
ບໍ? ແລະເຂົາດິນແດນເຫລົ່ານີ້ໃຫຍ່ກວ່າເຂດແດນຂອງພວກເຈົ້າຫລືບໍ?
3 ພວກເຈົ້າພຍາຍາມຢັບຢັ້ງບໍ່ໃຫ້ຄວາມຫລົ້ມຈົມມາຮອດພວກເຈົ້າໄວ ແຕ່ພວກເຈົ້າກໍຍັງສນັບສນຸນຄົນເຮັດຊົ່ວຢູ່
4 ຄວາມທຸກລຳບາກຈະເກີດແກ່ພວກເຈົ້າຜູ້ທີ່ນອນເທິງຕຽງທີ່ຕົກແຕ່ງດ້ວຍງາຊ້າງຢ່າງສຸກສະບາຍ ທີ່ນອນຢຽດຢ່າງມີ
ຄວາມສຸກທີ່ເທິງຕັ່ງອີ້ນອນ ແລະຈັດງານລ້ຽງດ້ວຍອາຫານຊັ້ນດີ ຄືຊີ້ນງົວແລະຊີ້ນແກະຊະນິດທີ່ນຶ່ງ
5 ພວກເຈົ້າມັກແຕ່ງເພງຮ້ອງຫລິ້ນດ້ວຍພິນດັ່ງດາວິດ ແລະປະດິດເຄື່ອງດົນຕຣີ
6 ດື່ມເຫລົ້າແລະທານ້ຳມັນຫອມຢ່າງດີ ບໍ່ໄດ້ເສົ້າເສັຽໃຈຕໍ່ການຮ້າງເປົ່າຂອງຣາຊອານາຈັກອິສຣາເອນເລີຍ
7 ດັ່ງນັ້ນພວກເຈົ້າຈະເປັນຜູ້ທຳອິດທີ່ຖືກເນຣະເທດ ສ່ວນການກິນລ້ຽງຕ່າງໆຈະບໍ່ມີອີກຕໍ່ໄປ

8 ພຣະຜູ້ເປັນເຈົ້າຊົງສາບານໄວ້ຢ່າງໜັກແໜ້ນ ພຣະເຈົ້າແຫ່ງຈັກກະວານຊົງກ່າວວ່າ, “ເຮົາກຽດຊັງຄວາມຈອງຫອງ
ຂອງພວກອິສຣາເອນ ແລະກຽດຊັງທຳໂຮງໃຫຍ່ຂອງພວກເຂົາ ເຮົາຈະມອບເມືອງນີ້ກັບທຸກໆສິ່ງໃນເມືອງນີ້ໄວ້ໃນກຳ
ມືຂອງສັດຕຣູ
9 ຖ້າຫາກວ່າໃນຄອບຄົວນຶ່ງມີຄົນຢູ່ສິບຄົນ ພວກເຂົາຈະຕ້ອງຕາຍໝົດ
10 ເວລາທີ່ຍາດພີ່ນ້ອງຂອງຜູ້ຕາຍຜູ້ນຶ່ງມາເອົາສົບໄປຈູດ ເຂົາໄດ້ຮ້ອງຫາຜູ້ທີ່ກຳລັງລີ້ຢູ່ໃນແຈເຮືອນນັ້ນວ່າ, “ຢູ່ນີ້ມີຄົນ
ຕາຍອີກບໍ?” ຜູ້ລີ້ນັ້ນກໍຕອບວ່າ “ບໍ່ມີດອກ” ແລະບອກຜູ້ຖາມອີກວ່າ “ຢ່າປາກເດີ ພວກເຮົາຕ້ອງລະວັງ ຢ່າໃຫ້ຜູ້ໃດ
ອອກພຣະນາມຂອງພຣະຜູ້ເປັນເຈົ້າ”
11 ເມື່ອພຣະຜູ້ເປັນເຈົ້າຊົງອອກຄຳສັ່ງແລ້ວ ເຮືອນໃຫຍ່ແລະເຮືອນນ້ອຍທັງຫລາຍຈະຖືກເພພັງລົງເປັນທ່ອນໆ
12 ຝູງມ້າຈະແລ່ນຂຶ້ນໜ້າຜາບໍ ແລະພວກຄົນຈະເອົາງົວໄປໄຖນ້ຳທະເລບໍ ແຕ່ພວກເຈົ້າກໍຍັງປ່ຽນຄວາມຍຸດຕິທັມເປັນ
ຄວາມອະທັມ ແລະເຮັດໃຫ້ຄວາມຖືກຕ້ອງກາຍເປັນຄວາມຜິດ
13 ພວກເຈົ້າທັງຫລາຍຍິນດີຍ້ອນຍຶດເອົາເມືອງໂລເດບາໄດ້ ແລະຍັງເວົ້າວ່າ, “ພວກເຮົາມີກຳລັງພຽງພໍທີ່ຈະຍຶດເອົາ
ເມືອງການາອິມອີກ”
14 ພຣະເຈົ້າແຫ່ງຈັກກະວານຊົງກ່າວຕອບວ່າ, “ຊາວອິສຣາເອນເອີຍ, ເຮົາກຳລັງຈະສົ່ງຊົນຊາດນຶ່ງມາຕໍ່ສູ້ພວກເຈົ້າ ພວ
ກເຂົາຈະກົດຂີ່ຂົ່ມເຫັງພວກເຈົ້າຕັ້ງແຕ່ທາງຫວ່າງພູເລໂບຮາມັດຈົນເຖິງຮ່ອມພູອາຣາບາ

## 7 ພຣະເຈົ້າຊົງໃຫ້ອາໂມສເຫັນຕັກແຕນທາງນິມິດ

Locusts, Fire, And a Plumb Line

1 ພຣະຜູ້ເປັນເຈົ້າຊົງສະແດງໃຫ້ຂ້າພະເຈົ້າເຫັນນິມິດ ຄືຂ້າພະເຈົ້າໄດ້ເຫັນພຣະອົງຊົງບັນດານໃຫ້ຝູງຕັກແຕນກິນຫຍ້າ
ທີ່ກຳລັງປົ່ງໃໝ່
2 ຫລັງຈາກການເກັບກ່ຽວຖວາຍໃຫ້ເຈົ້າຊີວິດແລ້ວ ໃນນິມິດນັ້ນ ຂ້າພະເຈົ້າໄດ້ເຫັນຝູງຕັກແຕນກິນໝົດທຸກຢ່າງທີ່ມີສີ
ຂຽວສົດຢູ່ໃນເຂດແດນນັ້ນ ຂ້າພະເຈົ້າຈຶ່ງເວົ້າວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ຂໍໂຜດອະພັຍໃຫ້ແກ່ໄພ່ພົນຂອງພຣະອົງ
ເທີນ ພວກນີ້ຈະສືບຊີວິດຕໍ່ໄປໄດ້ຢ່າງໃດ ເພາະວ່າພວກເຂົາຍັງເປັນກຸ່ມນ້ອຍແລະກຸ່ມອ່ອນແອຢູ່”
3 ຕໍ່ມາ ພຣະຜູ້ເປັນເຈົ້າຊົງປ່ຽນພຣະທັຍແລະຊົງກ່າວວ່າ, “ສິ່ງທີ່ເຈົ້າໄດ້ເຫັນນັ້ນຈະບໍ່ບັງເກີດຂຶ້ນມາ”

**ພຣະເຈົ້າຊົງໃຫ້ອາໂມສເຫັນໄຟທາງນິມິດ**

4 ພຣະຜູ້ເປັນເຈົ້າຊົງສະແດງໃຫ້ຂ້າພະເຈົ້າເຫັນນິມິດຢ່າງນີ້ ຄືຂ້າພະເຈົ້າໄດ້ເຫັນພຣະອົງຊົງຈັດຕຽມການລົງໂທດໄພ່
ພົນຂອງພຣະອົງ ໄຟໄດ້ລຸກໄໝ້ມະຫາສມຸດຢູ່ໃຕ້ພື້ນໂລກ ແລະເລີ້ມໄໝ້ຜືນແຜ່ນດິນ
5 ຄັນແລ້ວຂ້າພະເຈົ້າໄດ້ເວົ້າວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ຂໍຊົງໂຜດໃຫ້ເຫດການນີ້ຍຸດຕິລົງເທີນ ພວກໄພ່ພົນຂອງພຣ
ະອົງຈະສືບຊີວິດຕໍ່ໄປໄດ້ຢ່າງໃດ ເພາະວ່າພວກເຂົາຍັງເປັນກຸ່ມນ້ອຍແລະອ່ອນແອຢູ່”
6 ຝ່າຍພຣະຜູ້ເປັນເຈົ້າກໍຊົງປ່ຽນພຣະທັຍແລະກ່າວວ່າ, “ສິ່ງນີ້ຈະບໍ່ບັງເກີດຂຶ້ນມາອີກເໝືອນກັນ”

**ພຣະເຈົ້າຊົງໃຫ້ອາໂມສເຫັນສາຍເນັ່ງທາງນິມິດ**

7 ພຣະຜູ້ເປັນເຈົ້າຊົງສະແດງໃຫ້ຂ້າພະເຈົ້າເຫັນນິມິດຢ່າງນີ້ ຄືຂ້າພະເຈົ້າໄດ້ເຫັນພຣະອົງຊົງຢືນຢູ່ເທິງກຳແພງທີ່ສ້າງ
ຂຶ້ນດ້ວຍການໃຊ້ສາຍເນັ່ງ ແລະພຣະອົງກໍຊົງຖືສາຍເນັ່ງນັ້ນໄວ້ໃນພຣະຫັດ
8 ແລ້ວພຣະອົງຊົງຖາມຂ້າພະເຈົ້າວ່າ, “ອາໂມສເອີຍ, ເຈົ້າເຫັນຫຍັງແດ່?” ຂ້າພະເຈົ້າຕອບວ່າ, “ເຫັນສາຍເນັ່ງ” ແລ້ວ
ພຣະອົງຊົງກ່າວວ່າ, “ຈົ່ງເບິ່ງນີ້ເທີນ ເຮົາກຳລັງໃຊ້ມັນເພື່ອສະແດງເຖິງຄວາມຜິດຂອງໄພ່ພົນທີ່ກະທຳມາ ເຮົາຈະ
ປ່ຽນໃຈໃນການລົງໂທດພວກເຂົາ
9 ບ່ອນທີ່ເຊື້ອສາຍຂອງອີຊາກນະມັສການຈະຖືກທຳລາຍລົງ ແລະບ່ອນສັກສິດຂອງພວກອິສຣາເອນຈະຮ້າງເປົ່າ
ເພາະວ່າເຮົາຈະໃຫ້ເສິກເກີດຂຶ້ນ ຕໍ່ສູ້ຄອບຄົວຂອງເຈົ້າຊີວິດເຢໂຣໂບອາມ

### ອາມາຊີຢາຣາຍງານຕໍ່ເຈົ້າຊີວິດ

Amaziah Complains to the king

10 ຄັນຕໍ່ມາ ອາມາຊີຢາປະໂຣຫິດຂອງເມືອງເບັດເອນ ໄດ້ຣາຍງານໃຫ້ເຢໂຣໂບອາມເຈົ້າຊີວິດຂອງຊາວອິສຣາເອນ
ຊາບວ່າ ອາໂມສກຳລັງມີແຜນອຸບາຍກະບົດຕໍ່ສູ້ພຣະອົງຢູ່ໃນອິສຣາເອນ ຄວາມເວົ້າຂອງເຂົາຈະທຳລາຍປະເທດນີ້
11 ເຂົາເວົ້າວ່າ, “ເຢໂຣໂບອາມຈະຕ້ອງຕາຍຢູ່ໃນສນາມຮົບ ແລະພວກອິສຣາເອນຈະຕ້ອງຖືກເນຣະເທດອອກຈາກ
ແຜ່ນດິນຂອງພວກເຂົາ”
12 ອາມາຊີຢາຈຶ່ງເວົ້າຕໍ່ອາໂມສວ່າ, “ຫມໍມໍເອີຍ, ຈົ່ງກັບຄືນເມືອຣາຊອານາຈັກຢູດາ ແລະຫາລ້ຽງຊີບດ້ວຍການປະກາດ
ພຣະທັມຢູ່ທີ່ນັ້ນເທີ້ນ ຢ່າປະກາດພຣະທັມຢູ່ທີ່ເມືອງເບັດເອນນີ້ເລີຍ
13 ເພາະວ່າເປັນບ່ອນເຈົ້າຊີວິດນະມັສການ ແລະເປັນວິຫານຂອງປະເທດຊາດ”
14 ອາໂມສຈຶ່ງຕອບວ່າ, “ຂ້າພະເຈົ້າບໍ່ແມ່ນຜູ້ປະກາດພຣະທັມ ແລະການປະກາດພຣະທັມນີ້ບໍ່ແມ່ນຫນ້າທີ່ຂອງຂ້າພະ
ເຈົ້າ ຂ້າພະເຈົ້າເປັນຄົນລ້ຽງສັດແລະເປັນຜູ້ປູກຫມາກເດື່ອເທດເທົ່ານັ້ນ
15 ແຕ່ວ່າພຣະຜູ້ເປັນເຈົ້າໄດ້ໃຫ້ຂ້າພະເຈົ້າເຊົາລ້ຽງແກະຊຶ່ງເປັນວຽກຂອງຂ້າພະເຈົ້າ ແລະຊົງໃຫ້ຂ້າພະເຈົ້າໄປເປັນຜູ້
ເວົ້າຕໍ່ພວກອິສຣາເອນໄພ່ພົນຂອງພຣະອົງຕາງພຣະອົງ
16 ດ້ວຍເຫດນີ້ ຈົ່ງຟັງຖ້ອຍຄຳຂອງພຣະຜູ້ເປັນເຈົ້າເທີ້ນ ທ່ານບອກໃຫ້ຂ້າພະເຈົ້າເຊົາປະກາດພຣະທັມຕໍ່ສູ້ພວກອິສຣາ
ເອນ ແລະບໍ່ໃຫ້ເວົ້າໂຈມຕີເຊື້ອສາຍອີຊາກ
17 ເພາະສະນັ້ນ ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເມັຽຂອງທ່ານຈະເປັນຍິງໂສເພນີໃນເມືອງນີ້ ບຸດຊາຍຍິງຂອງທ່ານຈະຖືກ
ຂ້າຢູ່ໃນສົງຄາມ ແລະຜືນແຜ່ນດິນຂອງທ່ານຈະຖືກແບ່ງປັນໃຫ້ຄົນອື່ນ ແລ້ວທ່ານຈະຕາຍຢູ່ໃນດິນແດນຂອງຄົນ
ນອກສາສນາ ຝ່າຍປະຊາຊົນອິສຣາເອນຈະຖືກເນຣະເທດອອກຈາກແຜ່ນດິນຂອງພວກເຂົາ”

## 8 ພຣະເຈົ້າຊົງໃຫ້ອາໂມສເຫັນກະຕ່າຫມາກໄມ້ທາງນິມິດ

The Basket of Fruit

1 ພຣະຜູ້ເປັນເຈົ້າຊົງສະແດງໃຫ້ຂ້າພະເຈົ້າເຫັນນິມິດດັ່ງນີ້ ຄືຂ້າພະເຈົ້າໄດ້ເຫັນກະຕ່າຫມາກໄມ້
2 ພຣະຜູ້ເປັນເຈົ້າໄດ້ຊົງກ່າວວ່າ “ອາໂມສ ເຈົ້າໄດ້ເຫັນຫຍັງ?” ຂ້າພະເຈົ້າຕອບວ່າ, “ກະຕ່າຫມາກໄມ້” ພຣະຜູ້ເປັນ
ເຈົ້າຊົງກ່າວກັບຂ້າພະເຈົ້າວ່າ “ມື້ສຸດທ້າຍຂອງອິສຣາເອນໄພ່ພົນຂອງເຮົາຫມຸນວຽນມາຮອດແລ້ວ ເຮົາຈະບໍ່ປ່ຽນພ
ຣະທັຍໃນການລົງໂທດພວກເຂົາ
3 ໃນວັນນັ້ນສຽງຮ້ອງເພງໃນພຣະຣາຊວັງກໍຈະກາຍເປັນສຽງໂອ່ຍຄາງ ແລະຈະມີຊາກສົບຄົນຕາຍຢູ່ທຸກໆບ່ອນ ແຕ່ຈະ
ບໍ່ມີຜູ້ໃດຈົ່ມເປັນທຸກເສັຽໃຈເລີຍ”
4 ຈົ່ງຟັງເດີ ພວກທີ່ຢຽບຢ່ຳຄົນຂັດສົນ ແລະພຍາຍາມທຳລາຍຄົນທຸກຍາກຢູ່ໃນປະເທດນີ້
5 ພວກເຈົ້າເວົ້າກັບຕົວເອງວ່າ, “ເພື່ອຈະຂາຍເຂົ້າຂອງເຮົາ ພວກເຮົາເກືອບບໍ່ສາມາດລໍຄອຍຖ້າໃຫ້ຫມົດວັນພັກເຫລົ່າ
ນີ້ໄດ້ ຍັງດົນປານໃດວັນພັກຈະຫມົດໄປ ເພາະວ່າພວກເຮົາຈະເອົາເຂົ້າບເລອອກໄປຂາຍ ແລ້ວພວກເຮົາຈະຕ້ອງ
ໂກ່ງຣາຄາແພງໆ ແລະໃຊ້ເຄື່ອງຜອງແບບດັດແປງເອົາເອງເພື່ອສໍ້ໂກງຜູ້ມາຊື້
6 ພວກເຮົາຈະຊື້ເອົາຄົນທຸກຍາກມາເປັນທາດໃນຣາຄາເທົ່າກັບເກີບຄູ່ດຽວ ແລະພວກເຮົາຈະຂາຍເຂົ້າບເລທີ່ບໍ່ດີໃນຣາ
ຄາແພງໆ”
7 ພຣະຜູ້ເປັນເຈົ້າຂອງພວກອິສຣາເອນຊົງກ່າວຢ່າງເດັດຂາດວ່າ, “ເຮົາຈະບໍ່ລືມການກະທຳອັນຊົ່ວຊ້າຂອງພວກເຂົາ
8 ດັ່ງນັ້ນ ໂລກນີ້ຈະສະທ້ານຫວັ່ນໄຫວ ແຜ່ນດິນຈະພຸ່ງຂຶ້ນແລະເຈື່ອນລົງດັ່ງດຽວກັບແມ່ນ້ຳນິນ ທຸກໆຄົນໃນຜືນແຜ່ນ
ດິນຈະຕ້ອງໂສກເສົ້າເສັຽໃຈ
9 ໃນວັນນັ້ນ ເຮົາຈະໃຫ້ຕາເວັນຕົກໃນເວລາທ່ຽງວັນ ແລະໂລກຈະມືດມົນ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ

10 ເຮົາຈະໃຫ້ງານສລອງຕ່າງໆກາຍເປັນງານແຫ່ສົບແລະຈະປ່ຽນແປງເພງສນຸກສນານໃຫ້ເປັນສຽງຮ້ອງໄຫ້ທີ່ໂສກເສົ້າ
ເສັຽໃຈ ເຮົາຈະໃຫ້ພວກເຈົ້ານຸ່ງເຄື່ອງໄວ້ທຸກແລະແຖຜົມ ພວກເຈົ້າຈະເປັນເຫມືອນດັ່ງພໍ່ແມ່ທີ່ເສົ້າເສັຽໃຈນຳລູກຊາຍ
ໂທນທີ່ຕາຍໄປ ໃນວັນນັ້ນຈະມີແຕ່ຄວາມຂົມຂື່ນຕລອດໄປ
11 ເວລາທີ່ເຮົາຈະໃຫ້ການອຶດຢາກເກີດຂຶ້ນໃນແຜ່ນດິນກໍເຂົ້າມາໃກ້ແລ້ວ ປະຊາຊົນຈະອຶດຢາກ ແຕ່ບໍ່ແມ່ນຫິວເຂົ້າຈີ່
ຫລືນ້ຳ ແຕ່ພວກເຂົາຈະອຶດຫິວພຣະຄຳທີ່ມາຈາກພຣະເຈົ້າ ເຮົາພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້
12 ປະຊາຊົນຈະໄປທ່ອງທ່ຽວໄປມາຢ່າງອິດເມື່ອຍແຕ່ເຫນືອຕລອດໃຕ້ ຈາກທິດຕາເວັນອອກຈົນເຖິງທິດຕາເວັນຕົກ
ຈົນເຖິງທຸກທີ່ທຸກບ່ອນ ເພື່ອຊອກຫາພຣະຄຳທີ່ມາຈາກພຣະຜູ້ເປັນເຈົ້າ
13 ແຕ່ພວກເຂົາຈະບໍ່ພົບ ໃນວັນນັ້ນຜູ້ສາວທີ່ສວຍງາມ ແລະຊາຍຫນຸ່ມທັງຫລາຍຈະລົ້ມສະຫລົບລົງຍ້ອນການຫິວນ້ຳ
14 ສ່ວນຜູ້ທີ່ສາບານດ້ວຍຮູບໂຄຣົບຂອງກຸງຊາມາເຣັຽທີ່ວ່າ ໃນນາມພຣະເຈົ້າຂອງເມືອງດານ ຫລືໃນນາມພຣະເຈົ້າ
ຂອງເມືອງເບເອີເຊບາ ປະຊາຊົນເຫລົ່ານີ້ຈະຈົບຫາຍຫມົດ”

## 9 ພຣະເຈົ້າຊົງຕັດສິນພວກອິສຣາເອນ

The Destruction of Israel

1 ຂ້າພະເຈົ້າໄດ້ເຫັນພຣະຜູ້ເປັນເຈົ້າຊົງຢືນຢູ່ຂ້າງແທ່ນບູຊາ ພຣະອົງຊົງສັ່ງວ່າ, “ຈົ່ງທຸບຕີຍອດເສົາວິຫານ ເພື່ອໃຫ້ທົ່ວ
ທັງລະບຽງສະທ້ານຫວັ່ນໄຫວ ແລະໃຫ້ເສົາຫັກລົງເປັນທ່ອນໆທັບທົ່ວປະຊາຊົນ ສ່ວນເຮົາຈະຂ້າທຸກໆຄົນທີ່ເຫລືອ
ນັ້ນໃນສນາມຣົບ ໂດຍບໍ່ໃຫ້ຜູ້ນຶ່ງຜູ້ໃດແລ່ນປົບຫນີໄປໄດ້ ເຖິງວ່າພວກເຂົາຈະຂຸດຄົ້ນຊ່ອງທາງໄປສູ່ພິພົບຄົນຕາຍ
2 ເຮົາກໍຈະລັດຈັບເອົາພວກເຂົາຄືນມາ ຖ້າພວກເຂົາຂຶ້ນເມືອຟ້າສວັນເຮົາກໍຈະດຶງເຂົາລົງມາ
3 ຖ້າວ່າພວກເຂົາຈະລີ້ຢູ່ເທິງຍອດພູກາຣເມນ ເຮົາກໍຈະຄົ້ນຫາແລະຈັບເອົາເຂົາມາ ເຖິງຖ້າວ່າພວກເຂົາລີ້ເຮົາຢູ່ພື້ນນ້ຳ
ທະເລ ເຮົາກໍຈະສັ່ງນາກໃນທະເລກັດກິນເຂົາ
4 ແລະຖ້າວ່າພວກເຂົາເປັນຊະເລີຍເສິກຂອງສັດຕຣູ ເຮົາກໍຈະອອກຄຳສັ່ງໃຫ້ສັດຕຣູຂ້າເຂົາ ເຮົາໄດ້ຕັດສິນໃຈທຳລາຍ
ເຂົາ ແລະບໍ່ໄດ້ຊ່ອຍເຫລືອເຂົາ”
5 ພຣະເຈົ້າແຫ່ງຈັກກະວານໄດ້ແຕະຕ້ອງແຜ່ນດິນໂລກໃຫ້ເຈື່ອນເພພັງລົງ ແຜ່ນດິນຈະພຸ່ງຂຶ້ນ ແລະເຈື່ອນລົງດັ່ງດຽວ
ກັບແມ່ນ້ຳນິນ ທຸກໆຄົນທີ່ອາສັຍຢູ່ກໍໂສກເສົ້າເສັຽໃຈ
6 ພຣະຜູ້ເປັນເຈົ້າຊົງສ້າງພຣະຣາຊວັງຂອງພຣະອົງຢູ່ເທິງສວັນ ແລະໃຫ້ວົງໂຄ້ງຂອງທ້ອງຟ້າກວມໂລກຢູ່ ພຣະອົງຊົງ
ເອີ້ນເອົານ້ຳຂຶ້ນທະເລ ແລະຊົງຖອກເທນ້ຳນັ້ນລົງເທິງແຜ່ນດິນໂລກ ພຣະອົງຊົງພຣະນາມວ່າ ພຣະຜູ້ເປັນເຈົ້າ
7 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຊາວອິສຣາເອນເອີຍ, ເຮົາໄດ້ປະຕິບັດຕໍ່ພວກເຈົ້າດັ່ງໄດ້ປະຕິບັດຕໍ່ພວກເອທີໂອເປັຽ
ເຮົາໄດ້ພາພວກຟີລິສຕິນອອກຈາກເກາະຄັບໂຕ ແລະພາພວກຊີເຣັຽອອກຈາກເມືອງກີ ດັ່ງດຽວກັນກັບທີ່ເຮົາໄດ້ນຳ
ພາພວກເຈົ້າອອກຈາກປະເທດເອຢິບ
8 ເຮົາກຳລັງສັງເກດເບິ່ງຣາຊອານາຈັກອິສຣາເອນ ທີ່ເຕັມໄປດ້ວຍຄວາມບາບແລະຈະທຳລາຍມັນ ແຕ່ວ່າຈະບໍ່ທຳ
ລາຍຫມົດຈາກແຜ່ນດິນໂລກນີ້”
9 ຍ້ອນຄຳສັ່ງຂອງເຮົາ ເຮົາຈະຮ່ອນພວກອິສຣາເອນໃຫ້ກະວົນກະວາຍຢູ່ຖ້າມກາງຊົນຊາດຕ່າງໆ ເຫມືອນຮ່ອນເຂົ້າຢູ່
ໃນກະດົ້ງເຂີງ ເພື່ອແຍກຜູ້ທີ່ບໍ່ມີຄຸນຄ່າອອກ
10 ຜູ້ທີ່ເຮັດຜິດຢູ່ຖ້າມກາງປະຊາຊົນຂອງເຮົາ ທີ່ຍັງເວົ້າວ່າ “ພຣະເຈົ້າຈະບໍ່ໃຫ້ພັຍອັນຕລາຍຢ່າງໃດມາໃກ້ພວກເຮົາ ຄົນ
ເຫລົ່ານີ້ຈະຕ້ອງຖືກຂ້າ

### The Restoration of David’s Kingdom

(ກຈກ 15:16-17)

11 ໃນວັນນັ້ນ ເຮົາຈະສ້າງຄອບຄົວດາວິດ ຊຶ່ງເປັນເຫມືອນເຮືອນທີ່ຮ້າງເພພັງຂຶ້ນໃຫມ່ ເຮົາຈະແປງຝາເຮືອນນັ້ນ ແລະ
ສ້າງເຮືອນໃຫ້ມີສະພາບເຫມືອນແຕ່ກ່ອນ
12 ດັ່ງນັ້ນພວກອິສຣາເອນຈະໄດ້ຍຶດຄອງພວກທີ່ຍັງເຫລືອຢູ່ໃນປະເທດເອໂດມ ແລະຊົນຊາດອື່ນໆທີ່ເປັນຝ່າຍເຮົາມາ
ກ່ອນ ພຣະຜູ້ເປັນເຈົ້າຜູ້ຊົງໃຫ້ສິ່ງນີ້ບັງເກີດຂຶ້ນມາໄດ້ກ່າວໄວ້ດັ່ງນີ້ແຫລະ
13 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ວັນນັ້ນກຳລັງມາ ເມື່ອຊາວນາໄຖນາໃນຂນະທີ່ຄົນພວກອື່ນຍັງກຳລັງເກັບກ່ຽວຢູ່ ແລະຜູ້
ທີ່ບີບເອົານ້ຳອະງຸ່ນກໍກຳລັງບີບຢູ່ ໃນເວລາຜູ້ຫວ່ານເຂົ້າເລີ້ມຕົ້ນຫວ່ານໃຫມ່ ນ້ຳອະງຸ່ນຈະຍ້ອຍລົງຈາກພູເຂົາ ແລະ
ຈະໄຫລລົງຈາກພູນ້ອຍ
14 ເຮົາຈະນຳເອົາປະຊາຊົນຂອງເຮົາກັບຄືນສູ່ແຜ່ນດິນຂອງພວກເຂົາ ພວກເຂົາຈະກໍ່ສ້າງເມືອງຮ້າງຂຶ້ນໃຫມ່ ແລະອາ
ສັຍຢູ່ທີ່ນັ້ນ ຈະເຮັດສວນອະງຸ່ນແລະດື່ມເຫລົ້າອະງຸ່ນ ຈະເຮັດສວນແລະກິນຜົນລະປູກນັ້ນ
15 ເຮົາຈະປູກພວກເຂົາໄວ້ໃນແຜ່ນດິນທີ່ເຮົາໃຫ້ແກ່ເຂົາ ແລະພວກເຂົາຈະບໍ່ຖືກຫລົກອອກອີກຈັກເທື່ອ ພຣະຜູ້ເປັນເຈົ້າ
ຂອງພວກເຈົ້າຊົງກ່າວໄວ້ດັ່ງນີ້ແຫລະ